ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ.....7973.....
ນະຄອນຫຼວງວຽງຈັນ, ວັນທີ: 01 ກັນຍາ 2022

ຮຽນ: - ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງວັນທີ 01 ກັນຍາ 2022

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດຂໍແຈ້ງມະຕິສຳຄັນ ຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 01 ກັນຍາ 2022 ດັ່ງມີລາຍລະອຽດລຸ່ມນີ້:

- ຮັບຮອງເອກະສານລາຍງານການເງິນ ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກ ແລະ ລາຍງານການດຳເນີນທຸລະກິດ ສຳລັບ 6 ເດືອນ ຕົ້ນປີ 2022.
- ອະນຸມັດ ແລະ ຮັບຮອງການແຕ່ງຕັ້ງ ທ່ານ Yoshihito Oshima ເປັນສະມາຊິກສະພາບໍລິຫານຄົນໃໝ່, ເປັນ ປະທານເຈົ້າໜ້າທີ່ບໍລິຫານ, ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ, ເປັນຜູ້ອຳນວຍການໃຫຍ່ (ເປັນຕົວແທນທາງດ້ານກົດໝາຍ ທີ່ອອກຊື່ໃນໃບທະບຽນວິສາຫະກິດ ຄົນໃໝ່) ແທນ ທ່ານ Shingo Yamanaka ທີ່ໄປຮັບໜ້າທີ່ໃໝ່ ແລະ ສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.
- ຮັບຮອງ ການປັບປຸງການກະກຽມຈັດກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2022 ດັ່ງນີ້:

-ກຳນົດເອົາວັນທີ 30 ສິງຫາ 2022 ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະ ເຂົ້າຮ່ວມກອງປະຊຸມ ວິສາມັນຜູ້ຖືຮຸ້ນປະຈຳປີ 2022.

-ກຳນົດເອົາວັນທີ 13 ກັນຍາ 2022 ເປັນມື້ຈັດກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ປະຈຳປີ 2022.

-ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ: ຊັ້ນ 3, ຕຶກ ເອັນເອັນເອັນ, ບ້ານໂພນສີນວນ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ເວລາ 01:30 ໂມງ ຕອນແລງ.

-ກຳນົດວາລະກອງປະຊຸມ ຜູ້ຖືຮຸ້ນດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງການຈ່າຍເງິນປັນຜົນ ຈາກກຳໄລສະສົມຮອດທ້າຍປີ 2021

ວາລະທີ 2: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ສະມາຊິກສະພາບໍລິຫານຄົນໃໝ່, , ປະທານຄະນະກຳມະການ, ຜູ້ອຳນວຍການໃຫຍ່ (ເປັນຕົວແທນທາງດ້ານກົດໝາຍ ທີ່ອອກຊື່ໃນໃບທະບຽນວິສາຫະກິດ ຄົນໃໝ່), ປະທານເຈົ້າໜ້າທີ່ບໍລິຫານ.

ວາລະທີ 3: ບັນຫາອື່ນໆ (ຖ້າມີ)

- ອະນຸມັດໃຫ້ທ່ານ ໂຢຊິຮິໂຕ ໂອຊິມາ ເປັນຜູ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ
ສະພາບໍລິຫານ

ທ່ານ ຊິນໂກ ຢາມາມາກາ